ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ບົດລາຍງານເສດຖະກິດປະຈຳປີ
# 2015

ທະນາຄານແຫ່ງ ສປປ ລາວ

# ສາລະບານ


ຄຳເຫັນຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ........ 1
I. ການຂະຫຍາຍຕົວຂອງເສດຖະກິດ ສປປ ລາວ ........ 3
1.1. ຂະແໜງກະສິກຳ ........ 3
1.2. ຂະແໜງອຸດສາຫະກຳ ........ 4
1.3. ຂະແໜງບໍລິການ ........ 4
1.4. ອັດຕາເງິນເຟີ້ ........ 5
II. ຂະແໜງການເງິນຂອງລັດ ........ 6
2.1. ຖານະການເງິນຂອງລັດ ........ 6
2.2. ລາຍຮັບງົບປະມານ ........ 6
2.3. ລາຍຈ່າຍງົບປະມານ ........ 7
2.4. ດຸ່ນດ່ຽງງົບປະມານ ........ 7
III. ຂະແໜງການເງິນ-ເງິນຕາ ........ 8
3.1. ນະໂຍບາຍເງິນຕາ ........ 8
3.2. ຖານເງິນຕາ ........ 8
3.3. ປະລິມານເງິນ ........ 8
3.4. ນະໂຍບາຍອັດຕາແລກປ່ຽນ ........ 9
3.5. ການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ........ 9
3.6. ອັດຕາດອກເບ້ຍ ........ 10
3.7. ເງິນຝາກ ........ 11
3.8. ສິນເຊື່ອ ........ 11
3.9. ຕະຫຼາດຫຼັກຊັບ ........ 12
IV. ດຸນການຊຳລະກັບຕ່າງປະເທດ ........ 12
4.1. ດຸນການຊຳລະລວມ ........ 12
4.2. ດຸນບັນຊີຊຳລະປົກກະຕິ ........ 13
4.2.1. ດຸນການຄ້າ ........ 13
4.2.2. ດຸນບໍລິການ ........ 14
4.2.3. ດຸນລາຍໄດ້ ........ 14
4.2.4. ດຸນເງິນໂອນ ........ 14

4.3. ດຸນບັນຊີທຶນ ແລະ ບັນຊີການເງິນ .......... 14
4.4. ໜີ້ສິນຕໍ່ຕ່າງປະເທດ .......... 15
V. ທ່າອ່ຽງທາງດ້ານເສດຖະກິດຂອງ ສປປ ລາວ ໃນປີ 2016 .......... 15
ສະພາບໍລິຫານ .......... 17
ຜູ້ວ່າການ .......... 18
ຮອງຜູ້ວ່າການ .......... 18
ຜູ້ຊ່ວຍຄະນະຜູ້ວ່າການ .......... 18
ຫົວໜ້າກົມ ແລະ ທຽບເທົ່າກົມ .......... 19
ແຜນວາດ. ໂຄງຮ່າງການຈັດຕັ້ງຂອງທະນາຄານແຫ່ງ ສປປ ລາວ .......... 21

# ສາລະບານຮູບ

ຮູບທີ 1. ການຂະຫຍາຍຕົວຂອງເສດຖະກິດ.......... 3
ຮູບທີ 2. ການຂະຫຍາຍຕົວຂອງຂະແໜງກະສິກຳ.......... 4
ຮູບທີ 3. ການຂະຫຍາຍຕົວຂອງຂະແໜງອຸດສາຫະກຳ.......... 4
ຮູບທີ 4. ການຂະຫຍາຍຕົວຂອງຂະແໜງບໍລິການ.......... 5
ຮູບທີ 5. ໂຄງປະກອບຂອງອັດຕາເງິນເຟີ້ .......... 5
ຮູບທີ 6. ຖານະການເງິນຂອງລັດ.......... 6
ຮູບທີ 7. ລາຍຮັບງົບປະມານ .......... 6
ຮູບທີ 8. ລາຍຈ່າຍງົບປະມານ.......... 7
ຮູບທີ 9. ດຸ່ນດ່ຽງງົບປະມານ.......... 7
ຮູບທີ 10. ຖານເງິນຕາ .......... 8
ຮູບທີ 11. ປະລິມານເງິນ (M2) .......... 9
ຮູບທີ 12. ການເໜັງຕີງຂອງອັດຕາແລກປ່ຽນ (ປີທຽບປີ) .......... 9
ຮູບທີ 13. ອັດຕາດອກເບັ້ຍເງິນຝາກກຳນົດ 12 ເດືອນ.......... 10
ຮູບທີ 14. ອັດຕາດອກເບັ້ຍເງິນກູ້ກຳນົດ 1 ປີ .......... 10
ຮູບທີ 15. ເງິນຝາກຂອງທະນາຄານທຸລະກິດ.......... 11
ຮູບທີ 16. ສິນເຊື່ອຂອງທະນາຄານທຸລະກິດ ແຍກຕາມຂະແໜງການ.......... 11
ຮູບທີ 17. ດັດຊະນີຕະຫຼາດຫຼັກຊັບລາວ .......... 12
ຮູບທີ 18. ດຸນການຊຳລະກັບຕ່າງປະເທດ.......... 12
ຮູບທີ 19. ດຸນບັນຊີຊຳລະປົກກະຕິ.......... 13
ຮູບທີ 20. ດຸນການຄ້າ.......... 13
ຮູບທີ 21. ດຸນບໍລິການ.......... 14
ຮູບທີ 22. ດຸນບັນຊີທຶນ ແລະ ບັນຊີການເງິນ.......... 15
ຮູບທີ 23. ໜີ້ສິນຕໍ່ຕ່າງປະເທດ .......... 15

# ສາລະບານຕາຕະລາງ


ຕາຕະລາງທີ 1. ຕົວເລກຊີ້ບອກເສດຖະກິດທີ່ສຳຄັນຂອງ ສປປ ລາວ ....................22
ຕາຕະລາງທີ 2. ລວມຍອດຜະລິດຕະພັນພາຍໃນ ປະຈຳສົກປີ (ຕື້ກີບ) ....................23
ຕາຕະລາງທີ 3. ດັດຊະນີລາຄາຜູ້ຊົມໃຊ້ (ທຽບຖານ ເດືອນ 12/2010 = 100) ....................24
ຕາຕະລາງທີ 4. ອັດຕາເງິນເຟີ້ (ທຽບຖານ ເດືອນ 12/2010 = 100) ....................25
ຕາຕະລາງທີ 5. ຖານະການເງິນຂອງລັດ (ຕື້ກີບ) ....................26
ຕາຕະລາງທີ 6. ລາຍຮັບງົບປະມານ (ຕື້ກີບ) ....................28
ຕາຕະລາງທີ 7. ຖານະການເງິນຂອງທະນາຄານແຫ່ງ ສປປ ລາວ (ຕື້ກີບ) ....................29
ຕາຕະລາງທີ 8. ຖານະການເງິນຂອງທະນາຄານທຸລະກິດ (ຕື້ກີບ) ....................30
ຕາຕະລາງທີ 9. ຖານະການເງິນຂອງລະບົບທະນາຄານ (ຕື້ກີບ) ....................31
ຕາຕະລາງທີ 10. ອັດຕາດອກເບັ້ຍ (ຄິດເປັນສ່ວນຮ້ອຍ ຕໍ່ປີ) ....................32
ຕາຕະລາງທີ 11. ເງິນຝາກຂອງທະນາຄານທຸລະກິດ (ຕື້ກີບ) ....................34
ຕາຕະລາງທີ 12. ສິນເຊື່ອຂອງທະນາຄານທຸລະກິດ (ຕື້ກີບ) ....................35
ຕາຕະລາງທີ 13. ດຸນການຊໍາລະກັບຕ່າງປະເທດ (ລ້ານໂດລາສະຫະລັດ) ....................36
ຕາຕະລາງທີ 14. ການຄ້າຕ່າງປະເທດ (ລ້ານໂດລາສະຫະລັດ) ....................37
ຕາຕະລາງທີ 15. ໜີ້ສິນຕໍ່ຕ່າງປະເທດ (ລ້ານໂດລາສະຫະລັດ) ....................38
ຕາຕະລາງທີ 16. ອັດຕາແລກປ່ຽນທະນາຄານທຸລະກິດ ແລະ ຕະຫຼາດ ....................39
ຕາຕະລາງທີ 17. ຕົວເລກນັກທ່ອງທ່ຽວເຂົ້າມາລາວ ແລະ ລາຍຮັບຈາກການທ່ອງທ່ຽວ ....................40
ຕາຕະລາງທີ 18. ທີ່ຕັ້ງສຳນັກງານຂອງແຕ່ລະທະນາຄານທຸລະກິດ ....................41

# ຄຳເຫັນຜູ້ວ່າການ ທະນາຄານແຫ່ງ ສປປ ລາວ

ໃນປີ 2015, ເສດຖະກິດໂລກ ຂະຫຍາຍຕົວໃນຈັງຫວະຊ້າ ຢູ່ໃນລະດັບ 3,1%[1] ເນື່ອງຈາກເສດຖະກິດຂອງປະເທດຕະຫຼາດເກີດໃໝ່ ແລະ ເສດຖະກິດປະເທດກຳລັງພັດທະນາ ຂະຫຍາຍຕົວຊ້າລົງ ເປັນຕົ້ນແມ່ນເສດຖະກິດຂອງ ສປ ຈີນ ບວກກັບຄວາມຜັນຜວນຂອງລາຄານ້ຳມັນ, ລາຄາຄຳ, ລາຄາສະບຽງອາຫານ, ຮຸ້ນ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນ. ສຳລັບເສດຖະກິດຂອງ ສປປ ລາວ ຍັງສືບຕໍ່ຂະຫຍາຍຕົວຢູ່ໃນລະດັບດີ ຍ້ອນການລົງທຶນໂດຍກົງຈາກຕ່າງປະເທດ ໃນຂະແໜງພະລັງງານໄຟຟ້າ, ກໍ່ສ້າງ, ບໍລິການ, ບັນດາໂຄງການພັດທະນາເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ.

ຈາກສະພາບເສດຖະກິດຂ້າງເທິງ, ເພື່ອຮັກສາສະເຖຍລະພາບດ້ານລາຄາ ແລະ ເສດຖະກິດສືບຕໍ່ຂະຫຍາຍຕົວຕາມຄາດໝາຍທີ່ກຳນົດໄວ້, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ສືບຕໍ່ນຳໃຊ້ເຄື່ອງມືນະໂຍບາຍເງິນຕາທາງອ້ອມ ເປັນຕົ້ນແມ່ນໄດ້ປັບຫຼຸດອັດຕາດອກເບ້ຍພື້ນຖານ ຂອງ ທຫລ, ຄຸ້ມຄອງການກຳນົດອັດຕາດອກເບ້ຍເງິນຝາກ-ເງິນກູ້ຂອງທະນາຄານທຸລະກິດ, ອັດຕາເງິນແຮຝາກບັງຄັບ ແລະ ເຄື່ອງມືຕະຫຼາດເປີດ ສົມທົບກັບການນຳໃຊ້ນະໂຍບາຍອັດຕາແລກປ່ຽນ ດ້ວຍການກຳນົດອັດຕາແລກປ່ຽນອ້າງອີງປະຈຳວັນ ໃຫ້ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນ.

ພ້ອມດຽວກັນນັ້ນ, ທຫລ ໄດ້ເອົາໃຈໃສ່ຄຸ້ມຄອງ ແລະ ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ຕາມຫຼັກການ CAMELS, Basel I ແລະ ສ້າງເງື່ອນໄຂທັນການຄຸ້ມຄອງໄປສູ່ Basel II, ພ້ອມທັງຊຸກຍູ້ສົ່ງເສີມໃຫ້ທະນາຄານທຸລະກິດ ປັບປຸງການບໍລິການທີ່ຫຼາກຫຼາຍຮູບແບບ ແລະ ພັດທະນາລະບົບການຊຳລະສະສາງທີ່ທັນສະໄໝ ແລະ ປອດໄພ. ຄຽງຄູ່ກັນນັ້ນ, ໄດ້ຊຸກຍູ້ສົ່ງເສີມຂະຫຍາຍຕາໜ່າງຂະແໜງການເງິນຈຸລະພາກໃຫ້ກວ້າງຂວາງ ແລະ ທົ່ວເຖິງ; ເປັນເຈົ້າການໃນການພັດທະນາຕະຫຼາດທຶນ ດ້ວຍການປັບປຸງນິຕິກຳ ແລະ ສ້າງແຜນຍຸດທະສາດ ຊຶ່ງໃນເດືອນມີນາ 2015 ລັດຖະບານໄດ້ອອກດຳລັດຮັບຮອງ ແລະ ປະກາດໃຊ້ແຜນຍຸດທະສາດການພັດທະນາຕະຫຼາດທຶນ ຂອງ ສປປ ລາວ ແຕ່ປີ 2016-2025. ມາຮອດທ້າຍປີ 2015, ມີທະນາຄານທຸລະກິດທັງໝົດ 41 ແຫ່ງ, ສະຖາບັນການເງິນຈຸລະພາກ 147 ແຫ່ງ ແລະ ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ ທັງໝົດ 5 ບໍລິສັດ.

ຜ່ານການຈັດຕັ້ງປະຕິບັດຄືດັ່ງທີ່ກ່າວມາຂ້າງເທິງ, ທຫລ ສາມາດຮັກສາສະເຖຍລະພາບເງິນຕາແຫ່ງຊາດໄດ້ຢ່າງໝັ້ນທ່ຽງ, ອັດຕາເງິນເຟີ້ສະເລ່ຍໝົດປີຢູ່ໃນລະດັບ 1,28%; ເງິນກີບທຽບເງິນໂດລາ ອ່ອນຄ່າ 1,14%; ເສດຖະກິດຂະຫຍາຍຕົວໃນລະດັບ 7,4%[2]; ຄັງສຳຮອງເງິນຕາຕ່າງປະເທດ ສາມາດກຸ້ມການນຳເຂົ້າໄດ້ 6,37 ເດືອນ; ປະລິມານເງິນ M2 ເພີ່ມຂຶ້ນ 14,7%; ອັດຕາສ່ວນເງິນຝາກຕໍ່ GDP ກວມອັດຕາສ່ວນ 53,9%; ອັດຕາສ່ວນສິນເຊື່ອຕໍ່ GDP ກວມອັດຕາສ່ວນ 48,1%; ໜີ້ບໍ່ເກີດດອກອອກຜົນ ຢູ່ໃນລະດັບ 3%.

ໃນປີ 2016, ເສດຖະກິດໂລກຄາດວ່າຈະຟື້ນຕົວດີຂຶ້ນ ຍ້ອນມາດຕະການຜ່ອນຄາຍດ້ານການເງິນ ແຕ່ຍັງປະເຊີນໜ້າກັບການຜັນຜວນຂອງຕະຫຼາດການເງິນ-ເງິນຕາ ແລະ ຕະຫຼາດສິນຄ້າ. ສະນັ້ນ, ທຫລ ຈະສືບຕໍ່ປະຕິບັດນະໂຍ

[1] ບົດລາຍງານທ່າອ່ຽງເສດຖະກິດໂລກ ຂອງກອງທຶນການເງິນສາກົນ ສະບັບປັບປຸງ ໃນເດືອນມັງກອນ 2016.

[2] ລວມຍອດຜະລິດຕະພັນພາຍໃນ ສົກປີ 2014-15 (ຕົວເລກຄາດຄະເນເບື້ອງຕົ້ນ) ຂອງ ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

ບາຍເງິນຕາ, ນະໂຍບາຍອັດຕາແລກປ່ຽນ ເພື່ອຮັກສາສະເຖຍລະພາບທາງດ້ານເງິນຕາແຫ່ງຊາດໃຫ້ໝັ້ນທ່ຽງ, ຄຸ້ມຄອງລະບົບການເງິນ-ເງິນຕາໃຫ້ມີຄວາມໝັ້ນຄົງ ປະກອບສ່ວນຊຸກຍູ້ການຂະຫຍາຍຕົວຂອງເສດຖະກິດຢ່າງຕໍ່ເນື່ອງ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ດຣ ສົມພາວ ໄຟສິດ

## I. ການຂະຫຍາຍຕົວຂອງເສດຖະກິດ ສປປ ລາວ

ໃນສົກປີ 2014-15, ເສດຖະກິດຂອງ ສປປ ລາວ ຂະຫຍາຍຕົວຢູ່ໃນລະດັບ 7,4%. ຂະແໜງການທີ່ເປັນຕົວຂັບເຄື່ອນໃຫ້ເສດຖະກິດຂະຫຍາຍຕົວຕົ້ນຕໍແມ່ນ ຂະແໜງອຸດສາຫະກຳ ຂະຫຍາຍຕົວ 9,7%, ຮອງລົງມາຂະແໜງບໍລິການ 9,1% ແລະ ຂະແໜງກະສິກຳ 3,3% (ຮູບທີ 1). ຊຶ່ງປັດໄຈທີ່ເຮັດໃຫ້ເສດຖະກິດຂະຫຍາຍຕົວ ຢ່າງຕໍ່ເນື່ອງ ຍ້ອນການລົງທຶນໂດຍກົງຂອງຕ່າງປະເທດ ໃນຂະແໜງກໍ່ສ້າງ, ໄຟຟ້າ ແລະ ບໍລິການ. ໃນສົກປີນີ້ ລາຍຮັບສະເລ່ຍຕໍ່ຫົວຄົນ ບັນລຸໄດ້ 1.787 ໂດລາສະຫະລັດ.

**ຮູບທີ 1. ການຂະຫຍາຍຕົວຂອງເສດຖະກິດ**




**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

## 1.1. ຂະແໜງກະສິກຳ

ໃນສົກປີ 2014-15, ຂະແໜງກະສິກຳ ຂະຫຍາຍຕົວ 3,3%, ກວມອັດຕາສ່ວນ 23,7% ຂອງ GDP. ໃນນີ້, ການປູກຝັງ ແລະ ລ້ຽງສັດ ຂະຫຍາຍຕົວ 3,9%, ການປະມົງ 4,7% ເນື່ອງຈາກລັດຖະບານມີນະໂຍບາຍສົ່ງເສີມການຜະລິດ ເພື່ອຄໍ້າປະກັນດ້ານສະບຽງອາຫານ ແລະ ຜະລິດເປັນສິນຄ້າ ເປັນຕົ້ນແມ່ນໂຄງການຜະລິດເຂົ້າ ຢູ່ໃນ 10 ແຂວງຈຸດສຸມ ແລະ ໃນ 52 ເມືອງທົດລອງ 3 ສ້າງ[3]. ພ້ອມດຽວກັນນີ້, ໄດ້ມີການຫັນວິທີການຜະລິດແບບເກົ່າໄປສູ່ການຜະລິດແບບມີຈຸດສຸມ, ແບບເປັນກຸ່ມ, ມີການນຳໃຊ້ເຕັກນິກທີ່ທັນສະໄໝເຂົ້າໃນການປູກຝັງ ແລະ ລ້ຽງສັດ. ສ່ວນປ່າໄມ້ ຫຼຸດລົງ 13,5% ຕາມນະໂຍບາຍຫຼຸດຜ່ອນໂຄຕ້າຕັດໄມ້ຂອງລັດຖະບານ (ຮູບທີ 2).

[3] ກະຊວງກະສິກຳ ແລະ ປ່າໄມ້.

**ຮູບທີ 2. ການຂະຫຍາຍຕົວຂອງຂະແໜງກະສິກຳ**




**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

## 1.2. ຂະແໜງອຸດສາຫະກຳ

ຂະແໜງອຸດສາຫະກຳ ຂະຫຍາຍຕົວ 9,7%, ກວມອັດຕາສ່ວນ 29,3% ຂອງ GDP. ສາເຫດຍ້ອນອຸດສາຫະກຳໄຟຟ້າ-ນ້ຳປະປາ ແລະ ການກໍ່ສ້າງ ຂະຫຍາຍຕົວເພີ່ມຂຶ້ນ ເນື່ອງຈາກໂຮງງານຜະລິດໄຟຟ້າໃໝ່ທີ່ໄດ້ເລີ່ມຜະລິດກະແສໄຟຟ້າ ເພີ່ມຂຶ້ນ 8 ແຫ່ງ[4] ແລະ ບັນດາໂຄງການລົງທຶນທີ່ໄດ້ຮັບອະນຸມັດຢູ່ໃນໄລຍະການກໍ່ສ້າງ. ສ່ວນອຸດສາຫະກຳປຸງແຕ່ງ ແລະ ການຂຸດຄົ້ນບໍ່ແຮ່ ເພີ່ມຂຶ້ນຢູ່ໃນລະດັບໃກ້ຄຽງກັບສົກປີຜ່ານມາ (ຮູບທີ 3).

**ຮູບທີ 3. ການຂະຫຍາຍຕົວຂອງຂະແໜງອຸດສາຫະກຳ**




**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

## 1.3. ຂະແໜງບໍລິການ

ຂະແໜງບໍລິການ ຂະຫຍາຍຕົວ 9,1%, ກວມອັດຕາສ່ວນ 38,9% ຂອງ GDP. ໃນນັ້ນ, ຂະແໜງທີ່ຂະຫຍາຍຕົວຫຼາຍກວ່າໝູ່ແມ່ນ ບໍລິການດ້ານການຂົນສົ່ງ, ສາງ, ໄປສະນີ ແລະ ໂທລະຄົມມະນາຄົມ ຂະຫຍາຍຕົວ 12,9%; ການບໍລິຫານຂອງພາກລັດ 10,9%; ການບໍລິການດ້ານການເງິນ 9%; ການເຊົ່າຊື້ ແລະ ການບໍລິການທຸລະກິດ 8,2% ແລະ ການຄ້າຂາຍຍົກ-ຂາຍຍ່ອຍ ແລະ ສ້ອມແປງ 7,8% (ຮູບທີ 4).

[4] ໄດ້ແກ່: ໂຮງໄຟຟ້າຖ່ານຫີນຫົງສາ, ນ້ຳງຽບ 2, ນ້ຳຄານ 2, ນ້ຳອູ 2, ຫ້ວຍລຳພັນໃຫຍ່, ນ້ຳຊັນ 3B, ນ້ຳແບ່ງ ແລະ ນ້ຳສະນາ ຊຶ່ງມີກຳລັງຕິດຕັ້ງທັງໝົດ 2.491 ເມກາວັດ (MW) (ບົດສັງລວມກ່ຽວກັບໂຄງການຜະລິດໄຟຟ້າທົ່ວປະເທດ ສະບັບທີ 5 ໂດຍກົມນະໂຍບາຍ ແລະ ແຜນພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່).

**ຮູບທີ 4. ການຂະຫຍາຍຕົວຂອງຂະແໜງບໍລິການ**




**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

## 1.4. ອັດຕາເງິນເຟີ້

ອັດຕາເງິນເຟີ້ສະເລ່ຍໃນປີ 2015 ຢູ່ໃນລະດັບ 1,28% ຫຼຸດລົງຈາກ 4,13% ໃນປີຜ່ານມາ ຊຶ່ງເປັນອັດຕາເງິນເຟີ້ຕໍ່າສຸດ ໃນໄລຍະ 5 ປີຜ່ານມາ. ສາເຫດຕົ້ນຕໍມາຈາກລາຄານໍ້າມັນເຊື້ອໄຟ ຫຼຸດລົງ ສົ່ງຜົນໃຫ້ໝວດຄົມມະນາຄົມ ແລະ ຂົນສົ່ງ ຫຼຸດລົງ 7,34% ບວກກັບລາຄາເຂົ້າສານໜຽວ ແລະ ພືດຜັກ[5] ຫຼຸດລົງ ເຮັດໃຫ້ໝວດອາຫານ ແລະ ເຄື່ອງດື່ມບໍ່ແມ່ນເຫຼົ້າ ຫຼຸດລົງ 2,33% ທຽບໃສ່ປີຜ່ານມາ.

**ຮູບທີ 5. ໂຄງປະກອບຂອງອັດຕາເງິນເຟີ້**




**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

---

[5] ລາຄາປະເພດເຂົ້າສານໜຽວ (ປະເພດ 1) ຫຼຸດລົງ ຈາກ 6.911 ກີບ/ກິໂລ ໃນປີ 2014 ມາເປັນ 6.814 ກີບ/ກິໂລ ໃນປີ 2015. ສໍາລັບລາຄາພືດຜັກທີ່ຫຼຸດລົງ ເປັນຕົ້ນແມ່ນ: ໝາກເຜັດ, ກະທຽມ ແລະ ຜັກບົ່ວແຫ້ງ. ສາເຫດຂອງການຫຼຸດລົງແມ່ນຍ້ອນປະລິມານຜົນຜະລິດສະໜອງເຂົ້າສູ່ຕະຫຼາດເພີ່ມຂຶ້ນ ໃນປີ 2015.

## II. ຂະແໜງການເງິນຂອງລັດ

### 2.1. ຖານະການເງິນຂອງລັດ

ໃນສົກປີ 2014-15, ຖານະການເງິນຂອງລັດ ຂາດດຸນ 4.789 ຕື້ກີບ, ກວມອັດຕາສ່ວນ 4,8% ຂອງ GDP ຊຶ່ງເປັນການຂາດດຸນເພີ່ມຂຶ້ນເມື່ອທຽບກັບສົກປີຜ່ານມາ (ຮູບທີ 6). ໃນນັ້ນ, ການເກັບລາຍຮັບ ປະຕິບັດໄດ້ 22.720 ຕື້ກີບ, ເພີ່ມຂຶ້ນ 1,6% ແລະ ລາຍຈ່າຍ ປະຕິບັດໄດ້ 27.509 ຕື້ກີບ, ເພີ່ມຂຶ້ນ 3,9%.

**ຮູບທີ 6. ຖານະການເງິນຂອງລັດ**




**ແຫຼ່ງຂໍ້ມູນ:** ກະຊວງການເງິນ.

### 2.2. ລາຍຮັບງົບປະມານ

ໃນສົກປີ 2014-15, ລາຍຮັບງົບປະມານທັງໝົດ ປະຕິບັດໄດ້ 22.720 ຕື້ກີບ (ໃນນັ້ນ, ລາຍຮັບພາຍໃນ 18.174 ຕື້ກີບ ແລະ ເງິນຊ່ວຍເຫຼືອລ້າ 4.546 ຕື້ກີບ), ເພີ່ມຂຶ້ນ 1,6%, ກວມອັດຕາສ່ວນ 22,6% ຂອງ GDP (ຮູບທີ 7). ສາເຫດມາຈາກການເກັບລາຍຮັບອາກອນມູນຄ່າເພີ່ມ ແລະ ອາກອນກຳໄລ ເພີ່ມຂຶ້ນ 18% ແລະ 28,2% ຕາມລຳດັບ. ແຕ່ການເພີ່ມຂຶ້ນຂອງລາຍຮັບງົບປະມານ ແມ່ນຢູ່ໃນຈັງຫວະຊ້າ ຍ້ອນລາຍຮັບທີ່ບໍ່ແມ່ນພາສີອາກອນ ແລະ ລາຍຮັບຈາກເງິນຊ່ວຍເຫຼືອລ້າ ຫຼຸດລົງເມື່ອທຽບໃສ່ສົກປີຜ່ານມາ.

**ຮູບທີ 7. ລາຍຮັບງົບປະມານ**




**ແຫຼ່ງຂໍ້ມູນ:** ກະຊວງການເງິນ.

## 2.3. ລາຍຈ່າຍງົບປະມານ

ໃນສົກປີ 2014-15, ລາຍຈ່າຍງົບປະມານທັງໝົດ ປະຕິບັດໄດ້ 27.509 ຕື້ກີບ, ເພີ່ມຂຶ້ນ 3,9%, ກວມອັດຕາສ່ວນ 27,4% ຂອງ GDP (ຮູບທີ 8). ສາເຫດຕົ້ນຕໍແມ່ນຍ້ອນລາຍຈ່າຍລົງທຶນ ແລະ ລາຍຈ່າຍບໍລິຫານທົ່ວໄປ ເພີ່ມຂຶ້ນ 8,4% ແລະ 1,4% ຕາມລໍາດັບ. ແຕ່ການເພີ່ມຂຶ້ນຂອງລາຍຈ່າຍດັ່ງກ່າວ ແມ່ນຢູ່ໃນຈັງຫວະຊ້າ ຊຶ່ງເປັນຜົນມາຈາກມາດຕະການຄຸ້ມຄອງລາຍຈ່າຍ ຢ່າງເຂັ້ມງວດຂອງລັດຖະບານ ເພື່ອແກ້ໄຂຄວາມບໍ່ຄ່ອງຕົວທາງດ້ານການເງິນໃນສົກປີຜ່ານມາ.

**ຮູບທີ 8. ລາຍຈ່າຍງົບປະມານ**




**ແຫຼ່ງຂໍ້ມູນ:** ກະຊວງການເງິນ.

## 2.4. ດຸ່ນດ່ຽງງົບປະມານ

ໃນສົກປີ 2014-15, ງົບປະມານຂາດດຸນ ຈໍານວນ 4.789 ຕື້ກີບ, ກວມອັດຕາສ່ວນ 4,8% ຂອງ GDP (ຮູບທີ 9). ແຫຼ່ງທຶນດຸ່ນດ່ຽງງົບປະມານແມ່ນມາຈາກແຫຼ່ງທຶນພາຍໃນ ແລະ ຕ່າງປະເທດ. ສໍາລັບການຈໍາໜ່າຍພັນທະບັດຢູ່ຕ່າງປະເທດ ມີມູນຄ່າ 2.574 ຕື້ກີບ.

**ຮູບທີ 9. ດຸ່ນດ່ຽງງົບປະມານ**




**ແຫຼ່ງຂໍ້ມູນ:** ກະຊວງການເງິນ.

## III. ຂະແໜງການເງິນ-ເງິນຕາ

### 3.1. ນະໂຍບາຍເງິນຕາ

ໃນປີ 2015, ທຫລ ໄດ້ປັບຫຼຸດອັດຕາດອກເບ້ຍພື້ນຖານ ຈາກອັດຕາ 5% ເປັນ 4,5% ສໍາລັບເງິນກູ້ໄລຍະບໍ່ເກີນ 7 ວັນ, ຈາກອັດຕາ 6,25% ເປັນ 5,625% ສໍາລັບເງິນກູ້ໄລຍະ 7-14 ວັນ ແລະ ຈາກອັດຕາ 12,5% ເປັນ 11,25% ສໍາລັບເງິນກູ້ໄລຍະເກີນ 14 ວັນ ແຕ່ບໍ່ເກີນ 1 ປີ. ພ້ອມດຽວກັນນັ້ນ, ໄດ້ສືບຕໍ່ຮັກສາອັດຕາເງິນແຮຝາກບັງຄັບໄວ້ໃນອັດຕາ 5% ສໍາລັບເງິນກີບ ແລະ 10% ສໍາລັບເງິນຕາຕ່າງປະເທດ ແລະ ສືບຕໍ່ຊຸກຍູ້ການເຄື່ອນໄຫວໃນຕະຫຼາດເປີດຢ່າງເປັນປົກກະຕິ ພ້ອມທັງປະຕິບັດພາລະບົດບາດເປັນຜູ້ໃຫ້ກູ້ແຫຼ່ງສຸດທ້າຍ.

### 3.2. ຖານເງິນຕາ

ຖານເງິນຕາ ເພີ່ມຂຶ້ນຢູ່ໃນລະດັບ 6,6% ໃນນັ້ນ, ເງິນສົດຢູ່ຂອດຈໍລະຈອນ ຫຼຸດລົງ 0,8% ແລະ ເງິນຝາກເພີ່ມຂຶ້ນ 12% (ຮູບທີ 10). ສາເຫດຕົ້ນຕໍຍ້ອນກະແສເງິນທຶນຈາກຕ່າງປະເທດ ໃນນັ້ນ, ມີການລະດົມທຶນຈາກຕ່າງປະເທດຂອງພາກລັດ (ໃນຮູບແບບເງິນກູ້ຢືມ ແລະ ຈໍາໜ່າຍພັນທະບັດ) ແລະ ເງິນທຶນຈົດທະບຽນຈາກການສ້າງຕັ້ງທະນາຄານທຸລະກິດ ຈໍານວນ 4 ທະນາຄານ.

**ຮູບທີ 10. ຖານເງິນຕາ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

### 3.3. ປະລິມານເງິນ

ປະລິມານເງິນ (M2) ເພີ່ມຂຶ້ນ 14,7%, ກວມອັດຕາສ່ວນ 59,8% ຂອງ GDP. ສາເຫດຕົ້ນຕໍຍ້ອນກະແສເງິນລົງທຶນຈາກຕ່າງປະເທດໄຫຼເຂົ້າໃນຂະແໜງພະລັງງານໄຟຟ້າ ແລະ ການໃຊ້ຈ່າຍຂອງພາກລັດຖະບານ.

ອົງປະກອບຂອງປະລິມານເງິນ (M2) ປະກອບມີ: ເງິນສົດຢູ່ໃນຂອດຈໍລະຈອນ 9,8%, ເງິນຝາກເປັນສະກຸນເງິນກີບ 45,8% ແລະ ເງິນຝາກເປັນສະກຸນເງິນຕາຕ່າງປະເທດ 44,4% (ຮູບທີ 11).

**ຮູບທີ 11. ປະລິມານເງິນ (M2)**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ

## 3.4. ນະໂຍບາຍອັດຕາແລກປ່ຽນ

ທຫລ ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນ ດ້ວຍການກຳນົດອັດຕາແລກປ່ຽນອ້າງອີງປະຈຳວັນ ໃຫ້ແກ່ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນ ເປັນບ່ອນອີງໃນການກຳນົດອັດຕາຊື້-ຂາຍຂອງຕົນ ບໍ່ເກີນ ±0,25%, ຂະຫຍາຍຂອບສ່ວນຕ່າງລະຫວ່າງອັດຕາຊື້-ອັດຕາຂາຍ ສະກຸນເງິນກີບທຽບບາດ ຈາກ 0,5% ເປັນ 0,75%. ໃນປີ 2015, ອັດຕາແລກປ່ຽນສະເລ່ຍທົ່ວລະບົບ ເງິນກີບທຽບໂດລາສະຫະລັດ ອ່ອນຄ່າ 1,14%, ຢູ່ໃນລະດັບ 8.150,36 ກີບ/ໂດລາສະຫະລັດ ແຕ່ເງິນກີບທຽບບາດ ແຂງຄ່າ 4,05%, ຢູ່ໃນລະດັບ 240,59 ກີບ/ບາດ (ຮູບທີ 12).

**ຮູບທີ 12. ການເໜັງຕີງຂອງອັດຕາແລກປ່ຽນ (ປີທຽບປີ)**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.5. ການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ

ທຫລ ໄດ້ສືບຕໍ່ເອົາໃຈໃສ່ວຽກງານການຄຸ້ມຄອງ ແລະ ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ດ້ວຍສອງຮູບການຕົ້ນຕໍຄື: ກວດກາທາງເອກະສານ ແລະ ກວດກາປະຈຳປີ ບົນພື້ນຖານນຳໃຊ້ຫຼັກການ CAMELS ແລະ Basel I, ໄປຄຽງຄູ່ກັບການກະກຽມເງື່ອນໄຂປັດໄຈການພັດທະນາການຄຸ້ມຄອງທະນາຄານທຸລະກິດຫັນລະບົບການຄຸ້ມຄອງຕາມຫຼັກການ Basel II. ພ້ອມດຽວກັນນີ້, ເພື່ອເພີ່ມທາງເລືອກໃຫ້ສັງຄົມສາມາດເຂົ້າຫາແຫຼ່ງທຶນໄດ້ຫຼາກຫຼາຍ ແລະ ທົ່ວເຖິງ, ທຫລ ໄດ້ເອົາໃຈໃສ່ຄົ້ນຄວ້າສ້າງເງື່ອນໄຂຊຸກຍູ້ສິ່ງເສີມ ຂະຫຍາຍຂະແໜງການທະນາຄານ ແລະ ສະຖາບັນການເງິນ ຢ່າງກວ້າງຂວາງ ເຮັດໃຫ້ລະບົບທະນາຄານ ແລະ ສະຖາບັນການເງິນໄດ້ມີຄວາມ

ເຕີບໃຫຍ່ເຂັ້ມແຂງ. ມາຮອດທ້າຍປີ 2015, ທະນາຄານທຸລະກິດ ເພີ່ມຂຶ້ນ 04 ແຫ່ງຄື: ທະນາຄານ ເຟີດ ຄອມເມີໂຊ ແບັງ ຈໍາກັດ ສາຂານະຄອນຫຼວງວຽງຈັນ, ທະນາຄານ ແຫ່ງປະເທດຈີນ ຈໍາກັດ ສາຂານະຄອນຫຼວງວຽງຈັນ, ທະນາຄານ ແຄນນາເດຍ ລາວ ຈໍາກັດ ແລະ ທະນາຄານ ກຸງເທບ ຈໍາກັດ ສາຂາປາກເຊ, ຊຶ່ງມາຮອດປັດຈຸບັນມີທະນາຄານທຸລະກິດ ທັງໝົດ 41 ແຫ່ງ (ເບິ່ງຕາຕະລາງທີ 18). ສໍາລັບສະຖາບັນການເງິນຈຸລະພາກ ເພີ່ມຂຶ້ນ 24 ແຫ່ງ, ມາຮອດປັດຈຸບັນມີ ທັງໝົດ 147 ແຫ່ງ.

## 3.6. ອັດຕາດອກເບ້ຍ

ໃນປີ 2015, ທຫລ ໄດ້ປະຕິບັດນະໂຍບາຍອັດຕາດອກເບ້ຍ ດ້ວຍການຄຸ້ມຄອງການກໍານົດອັດຕາດອກເບ້ຍ ເງິນຝາກສະກຸນເງິນກີບ ຂອງທະນາຄານທຸລະກິດ, ກໍານົດສ່ວນຕ່າງລະຫວ່າງອັດຕາດອກເບ້ຍເງິນຝາກ-ເງິນກູ້ ສະເລ່ຍ ຖ່ວງນໍ້າໜັກຂອງທະນາຄານທຸລະກິດ ບໍ່ເກີນ 4%; ການປະຕິບັດດັ່ງກ່າວເຮັດໃຫ້ອັດຕາດອກເບ້ຍເງິນຝາກມີກໍານົດ 12 ເດືອນ ສະກຸນເງິນກີບ ສະເລ່ຍຫຼຸດລົງ ຈາກ 8,69% ມາເປັນ 7,11%, ສະກຸນເງິນໂດລາ ແລະ ສະກຸນເງິນບາດ ສະເລ່ຍ ຫຼຸດລົງ ຈາກ 4,12% ມາເປັນ 3,80% ແລະ ຈາກ 3,79% ມາເປັນ 3,69% ຕາມລໍາດັບ (ຮູບທີ 13).

**ຮູບທີ 13. ອັດຕາດອກເບ້ຍເງິນຝາກກໍານົດ 12 ເດືອນ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

ສໍາລັບອັດຕາດອກເບ້ຍເງິນກູ້ມີກໍານົດ 1 ປີ ສະກຸນເງິນກີບ ສະເລ່ຍຫຼຸດລົງ ຈາກ 12,99% ມາເປັນ 10,94%, ສະກຸນເງິນໂດລາ ແລະ ສະກຸນເງິນບາດ ສະເລ່ຍຫຼຸດລົງ ຈາກ 8,82% ແລະ 9,59% ມາເປັນ 7,82% ແລະ 8,37% ຕາມລໍາດັບ (ຮູບທີ 14).

**ຮູບທີ 14. ອັດຕາດອກເບ້ຍເງິນກູ້ກໍານົດ 1 ປີ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.7. ເງິນຝາກ

ໃນປີ 2015, ເງິນຝາກຂອງທະນາຄານທຸລະກິດ ເພີ່ມຂຶ້ນ 17,6%, ກວມອັດຕາສ່ວນ 53,9% ຂອງ GDP. ໃນນັ້ນ, ເງິນຝາກສະກຸນເງິນກີບ ເພີ່ມຂຶ້ນ 19,3% ແລະ ເງິນຝາກສະກຸນເງິນຕາຕ່າງປະເທດ ເພີ່ມຂຶ້ນ 16% (ຮູບທີ 15).

**ຮູບທີ 15. ເງິນຝາກຂອງທະນາຄານທຸລະກິດ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.8. ສິນເຊື່ອ

ສິນເຊື່ອຂອງທະນາຄານທຸລະກິດ ເພີ່ມຂຶ້ນ 19,9%, ກວມອັດຕາສ່ວນ 48,1% ຂອງ GDP. ໃນນັ້ນ, ໂຄງປະກອບຕົ້ນຕໍແມ່ນ ສິນເຊື່ອຂະແໜງອຸດສາຫະກຳ ແລະ ຫັດຖະກຳ ກວມອັດຕາສ່ວນ 24,2%, ຂະແໜງການຄ້າ 17,8%, ຂະແໜງກໍ່ສ້າງ 17,1%, ຂະແໜງບໍລິການ 10,3%, ຂະແໜງກະສິກຳ 9,2% ແລະ ຂະແໜງອື່ນໆ 16,6% ຂອງສິນເຊື່ອທັງໝົດ (ຮູບທີ 16).

**ຮູບທີ 16. ສິນເຊື່ອຂອງທະນາຄານທຸລະກິດ ແຍກຕາມຂະແໜງການ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.9. ຕະຫຼາດຫຼັກຊັບ

ໃນປີ 2015, ມີບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ຈໍານວນ 05 ບໍລິສັດ, ເພີ່ມຂຶ້ນ 01 ບໍລິສັດຄື: ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN). ການຊື້-ຂາຍຮຸ້ນທັງໝົດ 31,25 ລ້ານຮຸ້ນ, ເພີ່ມຂຶ້ນ 16,4% ທຽບໃສ່ປີຜ່ານມາ. ໃນນັ້ນ, ການຊື້-ຂາຍຮຸ້ນຂອງນັກລົງທຶນຕ່າງປະເທດ ກວມອັດຕາສ່ວນ 85%. ດັດຊະນີຕະຫຼາດຫຼັກຊັບລາວໃນປີ 2015 ປິດຢູ່ທີ່ 1.173,63 ຈຸດ ຈາກ 1.414,19 ຈຸດ ຫຼື ຫຼຸດລົງ 17% ເມື່ອທຽບໃສ່ປີຜ່ານມາ (ຮູບທີ 17).

**ຮູບທີ 17. ດັດຊະນີຕະຫຼາດຫຼັກຊັບລາວ**




**ແຫຼ່ງຂໍ້ມູນ:** ຕະຫຼາດຫຼັກຊັບລາວ.

# IV. ດຸນການຊໍາລະກັບຕ່າງປະເທດ

## 4.1. ດຸນການຊໍາລະລວມ

ໃນປີ 2015, ດຸນການຊໍາລະກັບຕ່າງປະເທດ ເກີນດຸນ 171 ລ້ານໂດລາສະຫະລັດ ຍ້ອນດຸນບັນຊີທຶນ ແລະ ການເງິນ ເກີນດຸນ 2.816 ລ້ານໂດລາສະຫະລັດ. ໃນຂະນະທີ່, ດຸນບັນຊີຊໍາລະປົກກະຕິ ຂາດດຸນ 2.265 ລ້ານໂດລາສະຫະລັດ ຊຶ່ງເຮັດໃຫ້ຄັງສໍາຮອງເງິນຕາຕ່າງປະເທດ ສາມາດກຸ້ມການນໍາເຂົ້າສິນຄ້າໄດ້ 6,37 ເດືອນ[6] (ຮູບທີ 18).

**ຮູບທີ 18. ດຸນການຊໍາລະກັບຕ່າງປະເທດ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

[6] ຕົວເລກນໍາເຂົ້າສະເລ່ຍປີ 2015 (ຕົວເລກເບື້ອງຕົ້ນ) 154,95 ລ້ານໂດລາສະຫະລັດຕໍ່ເດືອນ ຊຶ່ງບໍ່ລວມການນໍາເຂົ້າສິນຄ້າທີ່ມີແຫຼ່ງທຶນຮອງຮັບ. ໃນນັ້ນ, ລວມມີການນໍາເຂົ້າຂອງນັກລົງທຶນຕ່າງປະເທດ, ນໍາເຂົ້າຂອງໂຄງການຊ່ວຍເຫຼືອລ້າ ແລະ ນໍາເຂົ້າກູ້ຢືມພາກລັດ, ນໍາເຂົ້າຂອງອົງການຈັດຕັ້ງສາກົນ ແລະ ສະຖານທູດ.

## 4.2. ດຸນບັນຊີຊຳລະປົກກະຕິ

ດຸນບັນຊີຊຳລະປົກກະຕິ ຂາດດຸນ 2.265 ລ້ານໂດລາສະຫະລັດ, ກວມເອົາອັດຕາສ່ວນ 18,3% ຂອງ GDP ຊຶ່ງຂາດດຸນເພີ່ມຂຶ້ນເມື່ອທຽບໃສ່ປີຜ່ານມາ (ຮູບທີ 19). ສາເຫດຕົ້ນຕໍຍ້ອນດຸນການຄ້າ ຂາດດຸນ 2.464 ລ້ານໂດລາສະຫະລັດ ແລະ ດຸນລາຍໄດ້ ຂາດດຸນ 200 ລ້ານໂດລາສະຫະລັດ. ໃນຂະນະທີ່, ດຸນບໍລິການ ເກີນດຸນ 214 ລ້ານໂດລາສະຫະລັດ ແລະ ດຸນເງິນໂອນ ເກີນດຸນ 185 ລ້ານໂດລາສະຫະລັດ.

**ຮູບທີ 19. ດຸນບັນຊີຊຳລະປົກກະຕິ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

### 4.2.1. ດຸນການຄ້າ

ດຸນການຄ້າ ຂາດດຸນ 2.464 ລ້ານໂດລາສະຫະລັດ, ເພີ່ມຂຶ້ນ 53,1% ທຽບໃສ່ປີຜ່ານມາ, ກວມອັດຕາສ່ວນ 20% ຂອງ GDP (ຮູບທີ 20). ສາເຫດຕົ້ນຕໍຍ້ອນການນຳເຂົ້າ ເພີ່ມຂຶ້ນ 22,5% ໂດຍສະເພາະການນຳເຂົ້າສິນຄ້າໃຊ້ສອຍ ແລະ ສິນຄ້າທຶນ ເປັນຕົ້ນ: ອາຫານ ແລະ ເຄື່ອງດື່ມ, ນ້ຳມັນເຊື້ອໄຟ, ຍານພາຫະນະ, ເຄື່ອງຈັກ, ຄຳ ແລະ ອື່ນໆ. ໃນຂະນະທີ່, ການສົ່ງອອກ ເພີ່ມຂຶ້ນ 4% ຊຶ່ງຜະລິດຕະພັນຈາກອຸດສາຫະກຳ ກວມອັດຕາສ່ວນ 70,6% ແລະ ກະສິກຳ 10,1% ຂອງການສົ່ງອອກທັງໝົດ, ລາຍການສິນຄ້າສົ່ງອອກຕົ້ນຕໍແມ່ນ ຜະລິດຕະພັນບໍ່ແຮ່ (ທອງແດງ ແລະ ຄຳ), ໄຟຟ້າ, ຕັດຫຍິບ, ຜະລິດຕະພັນໄມ້, ເຄື່ອງປຸງແຕ່ງອາຫານ, ກາເຟ, ຢາສູບ, ທັນຍາພືດ, ໝາກໄມ້ ແລະ ອື່ນໆ.

**ຮູບທີ 20. ດຸນການຄ້າ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 4.2.2. ດຸນບໍລິການ

ດຸນບໍລິການສຸດທິ ເກີນດຸນ 214 ລ້ານໂດລາສະຫະລັດ (ຮູບທີ 21). ສາເຫດຕົ້ນຕໍຍ້ອນລາຍຮັບຈາກການບໍລິການທ່ອງທ່ຽວ ແລະ ລາຍຮັບຈາກການບິນຜ່ານ ເພີ່ມຂຶ້ນ 5,9% ແລະ 29,8% ຕາມລໍາດັບ, ຊຶ່ງລາຍຮັບຈາກການທ່ອງທ່ຽວ ມີມູນຄ່າ 679 ລ້ານໂດລາສະຫະລັດ, ກວມອັດຕາສ່ວນ 85% ຂອງລາຍຮັບທັງໝົດ. ສໍາລັບນັກທ່ອງທ່ຽວທີ່ເຂົ້າມາທ່ຽວ ສປປ ລາວ ໃນປີ 2015 ມີຈໍານວນ 4.362.491 ເທື່ອຄົນ, ຊຶ່ງນັກທ່ອງທ່ຽວມາຈາກປະເທດໄທ ກວມອັດຕາສ່ວນ 51,6%, ສສ ຫວຽດນາມ 24,2%, ສປ ຈີນ 9,9%, ສ ເກົາຫຼີ 2,8% ແລະ ປະເທດອື່ນໆ 11,5% ຂອງຈໍານວນນັກທ່ອງທ່ຽວທັງໝົດ.

**ຮູບທີ 21. ດຸນບໍລິການ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 4.2.3. ດຸນລາຍໄດ້

ດຸນລາຍໄດ້ສຸດທິ ຂາດດຸນ 200 ລ້ານໂດລາສະຫະລັດ, ເພີ່ມຂຶ້ນ 60,5% ເມື່ອທຽບໃສ່ປີຜ່ານມາ. ສາເຫດຍ້ອນການໂອນລາຍຮັບຂອງແຮງງານຕ່າງປະເທດ ທີ່ເຮັດວຽກໃນບັນດາໂຄງການລົງທຶນໂດຍກົງຂອງຕ່າງປະເທດ ກັບຄືນປະເທດ ແລະ ລາຍຈ່າຍຊໍາລະດອກເບັ້ຍເງິນກູ້ຂອງລັດຖະບານ.

## 4.2.4. ດຸນເງິນໂອນ

ດຸນເງິນໂອນສຸດທິ ເກີນດຸນ 185 ລ້ານໂດລາສະຫະລັດ, ຫຼຸດລົງ 35,7% ເມື່ອທຽບໃສ່ປີຜ່ານມາ. ສາເຫດຂອງການເກີນດຸນຫຼຸດລົງຍ້ອນເງິນໂອນໃຫ້ພາກເອກະຊົນ ແລະ ເງິນໂອນຊ່ວຍເຫຼືອລ້າພາກລັດຖະບານ ຫຼຸດລົງ 46,9% ແລະ 27,6% ຕາມລໍາດັບ.

## 4.3. ດຸນບັນຊີທຶນ ແລະ ບັນຊີການເງິນ

ດຸນບັນຊີທຶນ ແລະ ການເງິນ ເກີນດຸນ 2.816 ລ້ານໂດລາສະຫະລັດ, ເພີ່ມຂຶ້ນ 63,7% ທຽບໃສ່ປີຜ່ານມາ, ກວມອັດຕາສ່ວນ 22,8% ຂອງ GDP (ຮູບທີ 22). ສາເຫດຍ້ອນການລົງທຶນໂດຍກົງຈາກຕ່າງປະເທດ, ການລົງທຶນໃນຫຼັກຊັບ ແລະ ການລົງທຶນອື່ນໆ ເພີ່ມຂຶ້ນ 18,2%, 47,3% ແລະ 170,2% ຕາມລໍາດັບ. ຊຶ່ງໃນປີນີ້ ທັງພາກລັດ ແລະ ເອກະຊົນ ໄດ້ມີການລະດົມທຶນຈາກຕ່າງປະເທດ ເພື່ອເປັນແຫຼ່ງທຶນສະໜອງເຂົ້າໃນການພັດທະນາບັນດາໂຄງການຕ່າງໆທີ່ໄດ້ຮັບອະນຸມັດ.

**ຮູບທີ 22. ດຸນບັນຊີທຶນ ແລະ ບັນຊີການເງິນ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 4.4. ໜີ້ສິນຕໍ່ຕ່າງປະເທດ

ໃນປີ 2015, ຍອດເຫຼືອໜີ້ສິນຕໍ່ຕ່າງປະເທດ ຂອງ ສປປ ລາວ ມີຈໍານວນ 5.627 ລ້ານໂດລາສະຫະລັດ, ເພີ່ມຂຶ້ນ 3,8%, ກວມອັດຕາສ່ວນ 45,6% ຂອງ GDP. ໃນນັ້ນ, ໜີ້ສິນສອງຝ່າຍ ກວມອັດຕາສ່ວນ 69,7% ແລະ ໜີ້ສິນຫຼາຍຝ່າຍ ກວມອັດຕາສ່ວນ 30,3% ຂອງໜີ້ສິນຕໍ່ຕ່າງປະເທດທັງໝົດ (ຮູບທີ 23).

**ຮູບທີ 23. ໜີ້ສິນຕໍ່ຕ່າງປະເທດ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

# V. ທ່າອ່ຽງທາງດ້ານເສດຖະກິດຂອງ ສປປ ລາວ ໃນປີ 2016

ໃນປີ 2016, ເສດຖະກິດໂລກ[7] ຄາດວ່າຈະຟື້ນຕົວດີຂຶ້ນ ແຕ່ຍັງປະເຊີນໜ້າກັບການຜັນຜວນຂອງລາຄານໍ້າມັນ, ລາຄາຄໍາ ແລະ ລາຄາສິນຄ້າ. ສໍາລັບເສດຖະກິດຂອງ ສປປ ລາວ ຄາດວ່າຈະຂະຫຍາຍຕົວຢ່າງຕໍ່ເນື່ອງ ສະເລ່ຍຢູ່ໃນລະດັບ 7,5% ຕໍ່ປີ; ອັດຕາເງິນເຟີ້ສະເລ່ຍໝົດປີ ຄາດວ່າມີທ່າອ່ຽງຫຼຸດລົງ ຊຶ່ງເປັນເງື່ອນໄຂດີໃຫ້ແກ່ການຄຸ້ມຄອງມະຫາພາກດ້ານເງິນຕາ, ກະແສເງິນລົງທຶນໂດຍກົງຂອງຕ່າງປະເທດ ສືບຕໍ່ໄຫຼເຂົ້າຢ່າງຕໍ່ເນື່ອງ. ສະນັ້ນ, ເພື່ອສືບຕໍ່ຊຸກຍູ້ການຂະຫຍາຍຕົວຂອງເສດຖະກິດຢ່າງຕໍ່ເນື່ອງ ແລະ ຮັກສາສະເຖຍລະພາບດ້ານເງິນຕາໃຫ້ໝັ້ນທ່ຽງ, ທຫລ ຈະສືບຕໍ່ນໍາໃຊ້

---

[7] ບົດລາຍງານທ່າອ່ຽງເສດຖະກິດໂລກ ຂອງກອງທຶນການເງິນສາກົນ ສະບັບປັບປຸງ ໃນເດືອນມັງກອນ 2016.

ນະໂຍບາຍເງິນຕາ; ນະໂຍບາຍອັດຕາແລກປ່ຽນ ແລະ ຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ຕາມຫຼັກການຮັກສາຄວາມໝັ້ນຄົງ ແລະ ສາມາດເຊື່ອມໂຍງກັບສາກົນເທື່ອລະກ້າວ.

# ສະພາບໍລິຫານ



ທ່ານ ດຣ. ບຸນປອນ ບຸດຕະນະວົງ
ຮອງນາຍົກລັດຖະມົນຕີ
ປະທານສະພາບໍລິຫານ ທຫລ



ທ່ານ ດຣ. ສົມພາວ ໄຟສິດ
ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ,
ຮອງປະທານສະພາບໍລິຫານ ທຫລ



ທ່ານ ດຣ. ລຽນ ທິແກ້ວ
ລັດຖະມົນຕີວ່າການ ກະຊວງການເງິນ,
ຮອງປະທານສະພາບໍລິຫານ ທຫລ



ທ່ານ ສຽວສະຫວາດ ສະແຫວງສຶກສາ
ລັດຖະມົນຕີຊ່ວຍວ່າການ ກະຊວງອຸດສະຫະກຳ ແລະ ການຄ້າ,
ກຳມະການສະພາບໍລິຫານ ທຫລ



ທ່ານ ສົມບຸນ ລາຊາສິມບັດ
ລັດຖະມົນຕີຊ່ວຍວ່າການ ກະຊວງ
ພະລັງງານ ແລະ ບໍ່ແຮ່,
ກຳມະການສະພາບໍລິຫານ ທຫລ



ທ່ານ ດຣ. ຕີ ພົມມະຈັກ
ລັດຖະມົນຕີຊ່ວຍວ່າການ ກະຊວງກະສິກຳ-ປ່າໄມ້,
ກຳມະການສະພາບໍລິຫານ ທຫລ



ທ່ານ ດຣ. ບຸນທະວີ ສີສຸພັນທອງ
ລັດຖະມົນຕີຊ່ວຍວ່າການ ກະຊວງແຜນການ
ແລະ ການລົງທຶນ,
ກຳມະການສະພາບໍລິຫານ ທຫລ



ທ່ານ ດຣ. ທັນສະໄໝ ກົມມະສິດ
ລັດຖະມົນຕີຊ່ວຍວ່າການ ກະຊວງໄປສະນີ, ໂທລະຄົມ
ມະນາຄົມ ແລະ ການສື່ສານ,
ກຳມະການສະພາບໍລິຫານ ທຫລ



ທ່ານ ສອນໄຊ ສິດພະໄຊ
ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ,
ກຳມະການສະພາບໍລິຫານ ທຫລ

# ຜູ້ອໍານວຍການ



ທ່ານ ດຣ. ສົມພາວ ໄຟສິດ
ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ

# ຮອງຜູ້ວ່າການ



ທ່ານ ຄໍາວົງ ທິບພະວົງ
ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ



ທ່ານ ສອນໄຊ ສິດພະໄຊ
ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ



ທ່ານ ນ. ວັດທະນາ ດາລາລອຍ
ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ

# ຜູ້ຊ່ວຍຄະນະຜູ້ວ່າການ



ທ່ານ ດຣ. ນ. ຄໍາພາ ປານມະໄລທອງ
ຜູ້ຊ່ວຍຄະນະຜູ້ວ່າການ ທະນາຄານແຫ່ງ ສປປ ລາວ

# ຫົວໜ້າກົມ ແລະ ທຽບເທົ່າກົມ


ທ່ານ ນ. ພາສີ ພິມມະກອນ
ຫົວໜ້າຫ້ອງການ ທຫລ


ທ່ານ ນ. ບຸນຕາ ດາຣາວີ
ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ


ທ່ານ ໜໍ່ແກ້ວ ມຸນີວົງ
ຫົວໜ້າກົມກວດກາພາຍໃນ


ທ່ານ ຄຳພຸດ ສິດທິລາດ
ຫົວໜ້າກົມນະໂຍບາຍເງິນຕາ


ທ່ານ ພຸດທະໄຊ ສີວິໄລ
ຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ


ທ່ານ ດຣ. ອາຄົມ ປຣະເສີດ
ຫົວໜ້າກົມຄຸ້ມຄອງສະຖາບັນການເງິນ


ທ່ານ ນ. ຂັນແກ້ວ ຫຼ້າມະນີເງົາ
ຫົວໜ້າກົມບັນຊີ-ການເງິນ


ທ່ານ ສີວິໄລ ພິມມະຈັກ
ຫົວໜ້າກົມເງິນຕາ


ທ່ານ ອ໊ອດ ພົນຊຽງດີ
ຫົວໜ້າກົມບໍລິການທະນາຄານ


ທ່ານ ເພັດສະຖາພອນ ແກ້ວວົງວິຈິດ
ຫົວໜ້າກົມພິວພັນສາກົນ


ທ່ານ ພານທອງ ກອງວົງສາ
ຫົວໜ້າກົມເຕັກໂນໂລຊີຂໍ້ມູນ
ຂ່າວສານ


ທ່ານ ນ. ດວງດີ ພົມວົງສາ
ຫົວໜ້າສະຖາບັນການທະນາຄານ



ທ່ານ ທອງຈະເລີນ ເຄນມີ່ງມີງຄົນ
ຫົວໜ້າສູນບໍລິການເກັບຊື້ໜີ້
ແລະ ຮັບຝາກເກັບໜີ້



ທ່ານ ສັນຕິ ພົນເມືອງລາວ
ຫົວໜ້າໂຮງພິມທະນາບັດ ທຫລ



ທ່ານ ພັນທະບູນ ໄຊຍະເພັດ
ຫົວໜ້າໜ່ວຍງານຂໍ້ມູນຕ້ານການຟອກເງິນ



ທ່ານ ນະ ຈັນຕະລີວົງ
ຫົວໜ້າ ທຫລ ພາກໃຕ້ ແຂວງຈຳປາສັກ



ທ່ານ ບຸນວົງ ດວງດອກເກດ
ຫົວໜ້າ ທຫລ ພາກກາງ ແຂວງສະຫວັນນະເຂດ



ທ່ານ ບຸນໄທ ສຸພັດທອນ
ຫົວໜ້າ ທຫລ ພາກເໜືອ ແຂວງອຸດົມໄຊ



ທ່ານ ອາລຸນ ບຸນຍົງ
ຫົວໜ້າ ທຫລ ພາກເໜືອ ແຂວງຫຼວງພະບາງ



ທ່ານ ນ. ສາຍສະໝອນ ຈັນທະຈັກ
ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງ
ຫຼັກຊັບ



ທ່ານ ວັນຄຳ ວໍຣະວົງ
ປະທານ ແລະ ຜູ້ອຳນວຍການໃຫຍ່
ຕະຫຼາດຫຼັກຊັບລາວ



ທ່ານ ນ. ແສງດາວວີ ວົງຄຳຊາວ
ຜູ້ອຳນວຍການກອງທຶນປົກປ້ອງຜູ້ຝາກເງິນ

## ແຜນວາດ. ໂຄງຮ່າງການຈັດຕັ້ງຂອງທະນາຄານແຫ່ງ ສປປ ລາວ



# ຕາຕະລາງທີ 1. ຕົວເລກຊີ້ບອກເສດຖະກິດທີ່ສຳຄັນຂອງ ສປປ ລາວ

| ລາຍການ | 2011 | 2012 | 2013 | 2014(R) | 2015(P) |
|---|---|---|---|---|---|
| **ຂະແໜງການຜະລິດ (ການປ່ຽນແປງຄິດເປັນສ່ວນຮ້ອຍ)** | | | | | |
| ລວມຍອດຜະລິດຕະພັນພາຍໃນ ຕາມລາຄາຄົງທີ່* | 8.04 | 7.93 | 8.02 | 7.6 | - |
| ອັດຕາເງິນເຟີ້ທ້າຍປີ | 7.70 | 4.73 | 6.65 | 2.40 | 0.90 |
| ອັດຕາເງິນເຟີ້ | 7.57 | 4.26 | 6.37 | 4.13 | 1.28 |
| **ການເງິນຂອງລັດ (ເປີເຊັນຕໍ່ GDP)** | **2010-11** | **2011-12** | **2012-13** | **2013-14(R)** | **2014-15(P)** |
| ລາຍຮັບງົບປະມານທັງໝົດ (ລວມເງິນຊ່ວຍເຫຼືອລ້າ) | 22.30 | 24.05 | 24.42 | 24.61 | 22.63 |
| ລາຍຮັບພາຍໃນ | 10.35 | 17.59 | 18.30 | 18.92 | 18.10 |
| ເງິນຊ່ວຍເຫຼືອລ້າ | 5.96 | 6.46 | 6.13 | 5.69 | 4.53 |
| ລາຍຈ່າຍງົບປະມານທັງໝົດ | 24.25 | 25.51 | 30.75 | 29.15 | 27.40 |
| ລາຍຈ່າຍບໍລິຫານທົ່ວໄປ | 11.69 | 13.26 | 19.81 | 18.57 | 17.03 |
| ລາຍຈ່າຍລົງທຶນ | 11.56 | 12.25 | 10.94 | 10.57 | 10.36 |
| ຂາດດຸນງົບປະມານ | -1.95 | -1.46 | -6.33 | -4.53 | -4.77 |
| ຂາດດຸນງົບປະມານ (ບໍ່ລວມເງິນຊ່ວຍເຫຼືອລ້າ) | -7.90 | -7.92 | -12.46 | -10.22 | -9.30 |
| **ຂະແໜງເງິນຕາ (ການປ່ຽນແປງຄິດເປັນສ່ວນຮ້ອຍ)** | **2011** | **2012** | **2013** | **2014** | **2015** |
| ປະລິມານເງິນ (M2) | 28.71 | 31.05 | 17.02 | 25.22 | 14.67 |
| **ຂະແໜງການເງິນຕ່າງປະເທດ (ເປີເຊັນຕໍ່ GDP)** | **2011** | **2012** | **2013** | **2014(R)** | **2015(P)** |
| ດຸນການຊຳລະລວມ | -0.63 | 0.65 | -0.72 | 1.31 | 1.39 |
| ດຸນບັນຊີຊຳລະປົກກະຕິ | 1.96 | -4.15 | -4.05 | -10.02 | -18.34 |
| ດຸນບັນຊີຊຳລະປົກກະຕິ (ບໍ່ລວມເງິນຊ່ວຍເຫຼືອລ້າ) | 0.11 | -5.95 | -5.45 | -11.45 | -19.32 |
| ດຸນການຄ້າ | -2.66 | -8.35 | -7.57 | -13.69 | -19.95 |
| ດຸນບັນຊີທຶນ ແລະ ການເງິນ | 11.76 | 8.99 | 12.62 | 14.63 | 22.80 |
| ຍອດໜີ້ສິນຕໍ່ຕ່າງປະເທດ | 36.52 | 42.29 | 38.66 | 46.14 | 45.56 |

**ໝາຍເຫດ:** P ໝາຍເຖິງຕົວເລກເບື້ອງຕົ້ນ
R ໝາຍເຖິງຕົວເລກປັບປຸງໃໝ່
*: ລາຄາຄົງທີ່ ແມ່ນອີງໃສ່ຖານປີ 2002

**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ; ກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ.

## ຕາຕະລາງທີ 2. ລວມຍອດຜະລິດຕະພັນພາຍໃນ ປະຈຳສົກປີ (ຕື້ກີບ)

| ລາຍການ | 2010-11 | 2011-12 | 2012-13 | 2013-14 | 2014-15(P) |
|---|---|---|---|---|---|
| **ລວມຍອດຜະລິດຕະພັນພາຍໃນ ຕາມລາຄາໃນປີ** | **62,277.27** | **70,650.15** | **80,199.16** | **90,823.12** | **100,413.31** |
| **ລວມຍອດຜະລິດຕະພັນພາຍໃນຕໍ່ຫົວຄົນ (ໂດລາສະຫະລັດ)** | **1,213** | **1,355** | **1,534** | **1,671** | **1,787** |
| **ການຂະຫຍາຍຕົວຂອງລວມຍອດຜະລິດຕະພັນພາຍໃນ ຕາມລາຄາຄົງທີ່*** | **8.1** | **8.3** | **8.0** | **7.8** | **7.4** |
| **ລວມຍອດຜະລິດຕະພັນພາຍໃນ ຕາມລາຄາຄົງທີ່*** | **33,379.43** | **36,157.47** | **39,042.56** | **42,090.45** | **45,193.85** |
| **ກະສິກຳ** | **9,509.17** | **9,774.67** | **10,081.77** | **10,382.16** | **10,729.17** |
| ການປູກຝັງ ແລະ ລ້ຽງສັດ | 7,695.11 | 8,117.66 | 8,472.93 | 8,778.36 | 9,118.82 |
| ປ່າໄມ້ | 718.82 | 534.77 | 430.49 | 380.30 | 328.98 |
| ການປະມົງ | 1,095.23 | 1,122.24 | 1,178.35 | 1,223.51 | 1,281.36 |
| **ອຸດສາຫະກຳ** | **9,041.57** | **10,347.93** | **11,116.09** | **12,065.74** | **13,231.53** |
| ບໍ່ແຮ່ ແລະ ການຂຸດຄົ້ນ | 2,302.40 | 2,357.23 | 2,521.62 | 2,651.65 | 2,792.46 |
| ອຸດສາຫະກຳປຸງແຕ່ງ | 3,228.83 | 3,598.56 | 3,948.92 | 4,264.64 | 4,624.98 |
| ອຸດສາຫະກຳໄຟຟ້າ ແລະ ນ້ຳປະປາ | 1,514.29 | 1,965.43 | 1,997.49 | 2,185.00 | 2,482.05 |
| ການກໍ່ສ້າງ | 1,996.05 | 2,426.70 | 2,648.06 | 2,964.46 | 3,332.05 |
| **ການບໍລິການ** | **12,452.25** | **13,454.72** | **14,758.50** | **16,133.73** | **17,594.23** |
| ການຄ້າ ຂາຍຍົກ ຂາຍຍ່ອຍ ແລະ ສ້ອມແປງ | 6,475.67 | 7,032.62 | 7,501.28 | 8,068.76 | 8,699.15 |
| ໂຮງແຮມ ແລະ ຮ້ານອາຫານ | 236.71 | 258.31 | 269.16 | 279.18 | 295.19 |
| ການຂົນສົ່ງ, ສາງ, ໄປສະນີ ແລະ ໂທລະຄົມມະນາຄົມ | 1,577.28 | 1,732.22 | 1,919.91 | 2,152.36 | 2,429.39 |
| ການບໍລິການດ້ານການເງິນ | 1,181.39 | 1,333.79 | 1,458.81 | 1,643.17 | 1,791.79 |
| ການເຊົ່າຊື້ ແລະ ການບໍລິການທຸລະກິດ | 995.04 | 1,107.33 | 1,194.70 | 1,328.51 | 1,437.04 |
| ການບໍລິການມອນຊົນ, ສັງຄົມ ແລະ ສ່ວນບຸກຄົນ | 544.97 | 572.22 | 611.80 | 644.22 | 671.92 |
| ການວ່າຈ້າງພາຍໃນຄົວເຮືອນ | 229.57 | 242.45 | 256.66 | 264.09 | 275.65 |
| ການບໍລິຫານຂອງພາກລັດ | 2,294.87 | 2,502.86 | 3,012.66 | 3,377.66 | 3,747.50 |
| ສິ່ງການການບໍລິການດ້ານການເງິນ (ວັດແທກທາງອ້ອມ) | -1,083.25 | -1,327.07 | -1,466.47 | -1,624.21 | (1,753.41) |
| **ລວມຍອດມູນຄ່າເພີ່ມທັງໝົດທຸກຂະແໜງການ** | **31,002.98** | **33,577.32** | **35,956.36** | **38,581.63** | **41,554.93** |
| ອາກອນ ແລະ ພາສີຂອງຜະລິດຕະພັນ** | 2,376.44 | 2,580.15 | 3,086.20 | 3,508.82 | 3,638.92 |

**ໝາຍເຫດ:** P ໝາຍເຖິງຕົວເລກເບື້ອງຕົ້ນ

*: ລາຄາຄົງທີ່ ແມ່ນອີງໃສ່ຖານປີ 2002

**: ອາກອນຕໍ່າສຸດ, ອາກອນຕົວເລກທຸລະກິດ, ອາກອນມູນຄ່າເພີ່ມ, ອາກອນຊົມໃຊ້ ແລະ ພາສີນຳເຂົ້າ-ສົ່ງອອກ

**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

## ຕາຕະລາງທີ 3. ດັດຊະນີລາຄາຜູ້ຊົມໃຊ້ (ທຽບຖານ ເດືອນ 12/2010 = 100)

| ໝວດສິນຄ້າ | 2011 | 2012 | 2013 | 2014 | 2015 |
|---|---|---|---|---|---|
| **ດັດຊະນີລາຄາຜູ້ຊົມໃຊ້ລວມ** | **105.97** | **110.48** | **117.51** | **122.36** | **123.96** |
| **ດັດຊະນີແຕ່ລະໝວດສິນຄ້າ** | | | | | |
| 1. ໝວດສະບຽງອາຫານ ແລະ ເຄື່ອງດື່ມທີ່ບໍ່ແມ່ນເຫຼົ້າ | 108.80 | 114.89 | 129.37 | 138.27 | 144.58 |
| 2. ໝວດເຫຼົ້າ ແລະ ຢາສູບ | 102.08 | 105.29 | 109.76 | 114.61 | 117.44 |
| 3. ໝວດເຄື່ອງນຸ່ງຫົ່ມ ແລະ ເກີບ | 102.26 | 104.37 | 110.37 | 116.21 | 121.11 |
| 4. ໝວດທີ່ພັກອາໃສ, ນໍ້າປະປາ, ໄຟຟ້າ ແລະ ເຊື້ອເພີງ | 103.48 | 114.59 | 122.18 | 128.34 | 136.76 |
| 5. ໝວດເຄື່ອງໃຊ້ໃນເຮືອນ | 101.71 | 104.17 | 107.09 | 108.89 | 110.19 |
| 6. ໝວດການຮັກສາສຸຂະພາບ | 100.43 | 101.62 | 103.13 | 104.07 | 105.11 |
| 7. ໝວດຄົມມະນາຄົມ ແລະ ການຂົນສົ່ງ | 107.67 | 110.51 | 110.55 | 111.17 | 103.69 |
| 8. ໝວດໄປສະນີ ແລະ ໂທລະຄົມມະນາຄົມ | 103.74 | 105.09 | 107.01 | 107.79 | 108.81 |
| 9. ໝວດການບັນເທີງ ແລະ ການພັກຜ່ອນ | 100.82 | 102.20 | 104.55 | 106.23 | 106.42 |
| 10. ໝວດການສຶກສາ | 98.61 | 99.90 | 101.98 | 102.95 | 103.25 |
| 11. ໝວດຮ້ານອາຫານ ແລະ ໂຮງແຮມ | 104.97 | 113.51 | 123.40 | 132.52 | 136.50 |
| 12. ໝວດສິນຄ້າ ແລະ ການບໍລິການອື່ນໆ | 103.26 | 105.62 | 107.26 | 108.36 | 108.71 |

**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

## ຕາຕະລາງທີ 4. ອັດຕາເງິນເຟີ້ (ທຽບຖານ ເດືອນ 12/2010 = 100)

| ໝວດສິນຄ້າ | 2011 | 2012 | 2013 | 2014 | 2015 |
|---|---|---|---|---|---|
| **ອັດຕາເງິນເຟີ້** | **7.57** | **4.26** | **6.37** | **4.13** | **1.28** |
| 1. ໝວດສະບຽງອາຫານ ແລະ ເຄື່ອງດື່ມບໍ່ແມ່ນເຫຼົ້າ | 10.31 | 5.60 | 12.60 | 6.88 | 4.56 |
| 2. ໝວດເຫຼົ້າ ແລະ ຢາສູບ | 4.08 | 3.15 | 4.24 | 4.42 | 2.47 |
| 3. ໝວດເຄື່ອງນຸ່ງຫົ່ມ ແລະ ເກີບ | 3.09 | 2.06 | 5.74 | 5.29 | 4.22 |
| 4. ໝວດທີ່ພັກອາໃສ, ນ້ຳປະປາ, ໄຟຟ້າ ແລະ ເຊື້ອເພີງ | 4.40 | 10.73 | 6.62 | 5.04 | 6.57 |
| 5. ໝວດເຄື່ອງໃຊ້ໃນເຮືອນ | 1.93 | 2.42 | 2.80 | 1.68 | 1.20 |
| 6. ໝວດການຮັກສາສຸຂະພາບ | 1.84 | 1.19 | 1.48 | 0.91 | 1.00 |
| 7. ໝວດຄົມມະນາຄົມ ແລະ ການຂົນສົ່ງ | 9.81 | 2.65 | 0.03 | 0.56 | -6.73 |
| 8. ໝວດໄປສະນີ ແລະ ໂທລະຄົມມະນາຄົມ | 3.50 | 1.30 | 1.83 | 0.73 | 0.94 |
| 9. ໝວດການບັນເທີງ ແລະ ການພັກຜ່ອນ | 1.29 | 1.37 | 2.30 | 1.60 | 0.18 |
| 10. ໝວດການສຶກສາ | 0.88 | 1.30 | 2.08 | 0.95 | 0.30 |
| 11. ໝວດຮ້ານອາຫານ ແລະ ໂຮງແຮມ | 5.20 | 8.14 | 8.71 | 7.39 | 3.00 |
| 12. ໝວດສິນຄ້າ ແລະ ການບໍລິການອື່ນໆ | 8.00 | 2.29 | 1.55 | 1.02 | 0.32 |

**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

**ໝາຍເຫດ:** ຂໍ້ມູນບາງສ່ວນອາດຈະຍັງມີການດັດແກ້ ເນື່ອງຈາກມີການປັບປຸງໝວດສິນຄ້າຈາກ 10 ໝວດ ເປັນ 12 ໝວດ ໃນປີ 2011.

# ຕາຕະລາງທີ 5. ຖານະການເງິນຂອງລັດ (ຕື້ກີບ)

| ລາຍການ | 2010-11 | 2011-12 | 2012-13 | 2013-14(R) | 2014-15(P) |
|---|---|---|---|---|---|
| **ລາຍຮັບລວມ** | **13,890.07** | **16,992.40** | **19,587.00** | **22,356.08** | **22,719.72** |
| **ລາຍຮັບພາຍໃນ** | **10,181.27** | **12,427.75** | **14,674.27** | **17,186.52** | **18,173.92** |
| ລາຍຮັບພາສີອາກອນ | 9,108.64 | 10,914.85 | 12,651.89 | 14,297.09 | 15,675.87 |
| ລາຍຮັບບໍ່ແມ່ນພາສີອາກອນ | 1,072.63 | 1,512.90 | 2,022.38 | 2,889.45 | 2,498.05 |
| **ເງິນຊ່ວຍເຫຼືອລ້າ** | **3,708.80** | **4,564.65** | **4,912.72** | **5,169.55** | **4,545.80** |
| ເງິນຊ່ວຍເຫຼືອລ້າສໍາລັບໂຄງການ | 1,152.33 | 1,191.91 | 1,386.39 | 1,194.59 | 894.68 |
| ເງິນຊ່ວຍເຫຼືອລ້າທີ່ບໍ່ແມ່ນສໍາລັບໂຄງການ | 2,249.95 | 2,998.63 | 3,162.56 | 3,565.94 | 3,651.12 |
| ເງິນຊ່ວຍເຫຼືອລ້າທີ່ບໍ່ແມ່ນສໍາລັບໂຄງການ (ຍີ່ປຸ່ນ) | 70.00 | 34.00 | - | - | - |
| ເງິນຊ່ວຍເຫຼືອລ້າໂຄງການດັດແກ້ມະຫາພາກ | 236.53 | 340.12 | 363.77 | 409.03 | - |
| **ລາຍຈ່າຍລວມ** | **15,102.90** | **18,021.03** | **24,665.06** | **26,471.75** | **27,508.84** |
| **ລາຍຈ່າຍບໍລິຫານທົ່ວໄປ** | **7,905.76** | **9,364.89** | **15,888.44** | **16,869.30** | **17,103.29** |
| ເງິນເດືອນ ແລະ ເງິນອຸດໜູນຕ່າງໆ | 2,940.28 | 3,560.20 | 8,884.46 | 8,487.97 | 8,587.18 |
| ເງິນໂອນ | 1,866.00 | 2,014.85 | 2,183.63 | 2,333.28 | 2,433.29 |
| ວັດຖຸ ແລະ ອຸປະກອນ | 1,438.28 | 1,746.79 | 1,696.45 | 2,156.79 | 2,937.89 |
| ລາຍຈ່າຍຊໍາລະໜີ້ | 656.95 | 598.75 | 2,012.65 | 2,666.16 | 1,789.66 |
| ດອກເບ້ຍເງິນກູ້ | 446.51 | 590.95 | 1,005.12 | 880.53 | 1,125.75 |
| ຕ່າງປະເທດ | 373.00 | 473.49 | 467.19 | 683.02 | 885.09 |
| ພາຍໃນປະເທດ | 73.51 | 117.46 | 537.93 | 197.50 | 240.66 |
| ອື່ນໆ | 357.94 | 400.05 | 106.14 | 346.59 | 229.52 |
| ລາຍຈ່າຍເງິນເກີນແຜນ | 199.81 | 453.30 | - | - | - |
| **ລາຍຈ່າຍລົງທຶນ** | **7,197.14** | **8,656.15** | **8,776.62** | **9,602.45** | **10,405.54** |
| ລົງທຶນພາຍໃນ | 1,838.06 | 2,652.82 | 2,485.12 | 3,183.48 | 3,272.06 |
| ລົງທຶນຕ່າງປະເທດ | 5,359.08 | 6,003.33 | 6,291.50 | 6,418.96 | 7,133.49 |
| ເງິນກູ້ຢືມໂຄງການ | 1,956.81 | 1,812.79 | 1,742.55 | 1,658.44 | 2,587.69 |
| ເງິນຊ່ວຍເຫຼືອລ້າທີ່ເປັນໂຄງການ | 1,152.33 | 1,191.91 | 1,386.39 | 1,194.59 | 894.68 |
| ເງິນຊ່ວຍເຫຼືອລ້າທີ່ບໍ່ແມ່ນສໍາລັບໂຄງການ | 2,249.95 | 2,998.63 | 3,162.56 | 3,565.94 | 3,651.12 |
| ເງິນຊ່ວຍເຫຼືອລ້າໂຄງການດັດແກ້ມະຫາພາກ | - | - | - | - | - |
| **ດຸນເງິນສົດທົ່ວໄປ** | **2,275.51** | **3,062.87** | **(1,214.17)** | **317.22** | **1,070.53** |
| **ດຸນເງິນສົດລວມ** | **-1,212.84** | **-1,028.63** | **-5,078.06** | **-4,115.68** | **-4,789.22** |
| (ບໍ່ລວມເງິນຊ່ວຍເຫຼືອລ້າ) | -4,921.65 | -5,593.28 | -9,990.79 | -9,285.23 | -9,335.02 |
| **ດຸ່ນດ່ຽງງົບປະມານ** | **1,212.83** | **1,028.63** | **5,078.06** | **4,115.68** | **4,789.22** |
| **ແຫຼ່ງທຶນພາຍໃນ** | **-200.46** | **-155.23** | **3,905.11** | **1,674.54** | **-175.13** |
| **ລະບົບທະນາຄານ** | **-457.65** | **1,534.91** | **3,079.98** | **558.52** | **-1,304.89** |
| (ສິນເຊື່ອ) ລະບົບທະນາຄານ | -517.65 | 1,854.43 | 1,373.73 | -2,264.74 | -2,439.14 |
| (ຈໍາໜ່າຍ) ພັນທະບັດຄັງເງິນ | 260.00 | - | 300.00 | 300.00 | 300.00 |
| (ຈໍາໜ່າຍ) ພັນທະບັດລັດຖະບານ | - | - | 2,248.48 | 3,299.71 | 1,254.40 |
| (ໄຖ່ຖອນ) ພັນທະບັດຄັງເງິນ | -200.00 | -319.52 | -842.23 | -776.45 | -420.15 |
| **ບໍ່ແມ່ນລະບົບທະນາຄານ** | **257.19** | **-1,690.14** | **-825.13** | **-1,116.01** | **1,129.75** |
| (ຈໍາໜ່າຍ) ພັນທະບັດຄັງເງິນ | - | - | - | - | - |
| (ໄຖ່ຖອນ) ພັນທະບັດຄັງເງິນ | - | - | - | - | - |
| ຂາຍຊັບສິນ | 268.91 | 91.26 | 397.34 | 294.60 | 895.57 |
| ຍອດເຫຼືອຜ່ານມາ | 687.52 | - | - | - | 50.11 |
| ຜິດດ່ຽງ | -699.24 | -1,781.39 | 427.79 | -821.41 | 184.08 |

| | | | | | |
|---|---|---|---|---|---|
| **ແຫຼ່ງທຶນຕ່າງປະເທດ (ສຸດທິ)** | **1,413.29** | **1,183.86** | **1,172.96** | **2,441.14** | **4,964.35** |
| (ຈຳໜ່າຍ) ພັນທະບັດລັດຖະບານ | - | - | - | 734.13 | 2,574.43 |
| ເງິນກູ້ຢືມຕາມແຜນງານ | - | - | - | 280.37 | 117.14 |
| ເງິນກູ້ຢືມໂຄງການ | 1,956.81 | 1,812.79 | 1,742.55 | 1,658.44 | 2,587.69 |
| ເງິນຊຳລະຕົ້ນທຶນເງິນກູ້ຢືມ | -694.51 | -774.50 | -761.98 | -912.24 | -1,168.01 |
| ເງິນຊຳລະໜີ້ທີ່ບໍ່ແມ່ນໂຄງການ (ຈາກຍີ່ປຸ່ນ) | - | -34.00 | - | - | - |
| ກູ້ຢືມຕໍ່ສຸດທິ | 150.99 | 179.57 | 192.39 | 680.44 | 853.10 |

